ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 2213 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 20.10.2022

# ແຈ້ງການ

ເຖິງ : - ຫ້ອງການກະຊວງ, ບັນດາກົມ, ສະຖາບັນ, ແລະ ທຽບເທົ່າສູນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້.

- ບັນດາວິທະຍາໄລກະສິກຳ ແລະ ປ່າໄມ້, ໂຮງຮຽນຊົນລະປະທານຊັ້ນສູງທ່າງ່ອນ ທີ່ຂຶ້ນກັບ ກະຊວງກະສິກຳ ແລະ ປ່າໄມ້.
- ບັນດາພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ: ຄັດເລືອກພະນັກງານເຂົ້າຮ່ວມສະໝັກທຶນການສຶກສາໃນລະດັບ ປະລິນຍາໂທ ແລະ ປະລິນຍາເອກ ໃນຫົວຂໍ້ **" General Information of Agriculture Studies Networks for Food Security (Agri-Net) JFY 2023"** ທີ່ ປະເທດ ຍີ່ປຸ່ນ ປະຈຳປີ **2023.**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 1617/ກປ, ລົງວັນທີ 29 ທັນວາ 2021;
- ອີງຕາມ ແຈ້ງການຂອງກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ E20220930-02/VS, ລົງວັນທີ 30 ກັນຍາ 2022;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີຂອງ ພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ.

ກົມຈັດຕັ້ງ ແລະ ພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານ ເພື່ອຄັດເລືອກພະນັກງານເຂົ້າຮ່ວມສະໝັກທຶນການສຶກສາໃນລະດັບ ປະລິນຍາໂທ ແລະ ປະລິນຍາເອກ ໃນຫົວຂໍ້ " General Information of Agriculture Studies Networks for Food Security (Agri-Net) JFY 2023" ທີ່ ປະເທດ ຍີ່ປຸ່ນ ປະຈຳປີ 2023.

ສຳລັບລາຍລະອຽດຕ່າງໆຂອງທຶນແມ່ນມີເອກະສານຄັດຕິດມາພ້ອມນີ້ ຫຼື ພົວພັນພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ, ກົມຈັດຕັ້ງ ແລະ ພະນັກງານ: (ທ.ສົມເພັດອຸດອນ ດວງມາລາ) ໂທ: 021 415368, 020 52879569.

ພາຍຫຼັງທີ່ຄັດເລືອກເອົາພະນັກງານຜູ້ທີ່ມີເງື່ອນໄຂເໝາະສົມ ເພື່ອເຂົ້າຮ່ວມສະໝັກທຶນດັ່ງກ່າວແລ້ວ ໃຫ້ສົ່ງລາຍຊື່ແບບຟອມສະໝັກຕາມເງື່ອນໄຂຂອງອົງການຮ່ວມມືສາກົນຍີ່ປຸ່ນ (JICA) ເຖິງ ກົມຈັດຕັ້ງ ແລະ ພະນັກງານ ກ່ອນວັນທີ **28 ຕຸລາ 2022** ເພື່ອສັງລວມສົ່ງໃຫ້ ອົງການຮ່ວມມືສາກົນຍີ່ປຸ່ນ (JICA) ປະຈຳ ສປປ ລາວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

ຫົວໜ້າກົມ

ບຸນທະວີ ໄຊຍະເພັດ